ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ — ເລກທີ 1107/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 14.10.2020

ດ່ວນ

ກະຊວງອຸດສາຫະກຳແລະການຄ້າ
ຮັບ ເລກທີ 2016
ວັນທີ 14/10/20

# ແຈ້ງການ

**ຮຽນ:** - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ທີ່ເຄົາລົບ.
- ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ເຄົາລົບ.
- ທ່ານ ລັດຖະມົນຕີ ກະຊວງການຕ່າງປະເທດ.
- ທ່ານ ລັດຖະມົນຕີ ກະຊວງສາທາລະນະສຸກ.
- ທ່ານ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່.
- ທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ.
- ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ. ✓
- ທ່ານ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ.
- ທ່ານເຈົ້າແຂວງ ແຂວງບໍລິຄຳໄຊ.

**ເລື່ອງ:** ທິດຊີ້ນຳຕໍ່ການອະນຸມັດໃຫ້ເປີດດ່ານປະເພນີທ່າສະອາດ ຢູ່ເມືອງປາກກະດິງ, ແຂວງບໍລິຄຳໄຊ ຊົ່ວຄາວ ໃຫ້ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ເພື່ອນຳເຂົ້າວັດສະດຸອຸປະກອນທີ່ຈຳເປັນ ແລະ ຮີບດ່ວນທີ່ສຸດ ໃນການກໍ່ສ້າງໂຄງ ການເຂື່ອນໄຟຟ້ານ້ຳເທີນ 1.

- ອີງຕາມ ເອກະສານລາຍງານ ສະບັບເລກທີ 1267/ພບ, ລົງວັນທີ 28 ສິງຫາ 2020 ຂອງກະຊວງພະລັງງານ ແລະ ບໍ່ແຮ່.
- ອີງຕາມ ສະໂໜດນຳສົ່ງ ສະບັບເລກທີ 2106/ຫກງ, ລົງວັນທີ 8 ຕຸລາ 2020 ຂອງກະຊວງການເງິນ.
- ອີງຕາມ ການຊີ້ນຳຂອງ ທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 13 ຕຸລາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳຂອງ ທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: **"ເຫັນດີອະນຸມັດໃຫ້ເປີດດ່ານປະເພນີທ່າສະອາດ, ເມືອງປາກກະດິງ, ແຂວງບໍລິຄຳໄຊ ຊົ່ວຄາວ ເພື່ອຮັບໃຊ້ໃຫ້ແກ່ການນຳເຂົ້າວັດສະດຸອຸປະກອນທີ່ຈຳເປັນ ແລະ ຮີບດ່ວນທີ່ສຸດ ຂອງບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ສະເພາະຈຳນວນ 4 ລາຍການ ເຊິ່ງມີນ້ຳໜັກລວມ 134 ໂຕນ-191,60 ໂຕນ ຕໍ່ລາຍການ ຕາມອິນວອຍເລກທີ INV-NT1-HIN-110, INV-NT1-HIN-111, INV-NT1-HAV-034a ແລະ INV-NT1-HAV-034b. ພາຍຫຼັງຂົນເຄື່ອງສຳເລັດແລ້ວໃຫ້ປິດດ່ານດັ່ງກ່າວຄືນ. ໃຫ້ກະຊວງການເງິນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ຕິດຕາມການນຳເຂົ້າຕາມລະບຽບການ ບໍ່ໃຫ້ມີການສວຍໂອກາດອື່ນໆ, ພ້ອມນີ້ກໍ່ຕ້ອງປະຕິບັດຕາມມາດຕະການສະກັດກັ້ນ ແລະ ປ້ອງກັນພະຍາດໂຄວິດ-19 ທີ່ລັດຖະບານ ວາງອອກຢ່າງເຂັ້ມງວດ".**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ພ. ພົມ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ທ່ານ ນາຍົກ, ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| 4. ຄະນະ ຫສນຍ ທ່ານລະ | 01 ສະບັບ |
| 5. ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 ສະບັບ |
| 6. ກົມກວດກາ, ຫສນຍ | 01 ສະບັບ |
| 7. ກົມເລຂາ, ຫສນຍ | 01 ສະບັບ |
| 8. ສຳເນົາ | 01 ສະບັບ |